ເລື່ອງສັ້ນ

# ສິ່ງເສບຕິດ ທີ່ຊ່ວຍເຫຼືອໄດ້



ແຕ່ງໂດຍ: ນ. ວິໄລລັກ ຊາມຸນຕີ

ແຕ້ມໂດຍ: ນ. ສຸກສິງການ ແກ້ວບົວໂຮມ

ເດັກອາສາ ແຂວງ ວຽງຈັນ.

2005

PDF created with pdfFactory Pro trial version www.pdffactory.com



ຢູ່ໂຮງຮຽນແຫ່ງໜຶ່ງມີນັກຮຽນດີ ແລະ ເກັ່ງຄົນໜຶ່ງຊື່ວ່າ ທ້າວບົວສີ ໃຜໆກໍຍ້ອງວ່າລາວເປັນຄົນດີ ແລະ ຮຽນເກັ່ງ.



PDF created with pdfFactory Pro trial version www.pdffactory.com



ໃນຂະນະໜຶ່ງລາວຜິດຫວັງກັບຄົນຮັກ ລາວເສຍໃຈຫລາຍ ບັງເອີນ ໃນນັ້ນມີໝູ່ເພື່ອນ ຂອງລາວທີ່ເປັນຄົນບໍ່ດີ ຊັກຊວນໃຫ້ລາວໄປແນວທາງທີ່ບໍ່ດີ. "ບົວສີບໍ່ຕ້ອງເສຍໃຈດອກກັບຜູ້ຍິງຄົນນັ້ນ" ບົວສີຕອບໝູ່ຂອງລາວວ່າ: " ບໍ່ແມ່ນແຕ່ກັບຜູ້ຍິງຄົນນັ້ນດອກ ພໍ່ແມ່ກໍ່ບໍ່ເຄີຍສົນໃຈເຮົາເລີຍ ມີແຕ່ເຮັດວຽກຕະຫລອດ. ພວກເພິ່ນບໍ່ສົນໃຈເຮົາ" "ບໍ່ເປັນຫຍັງ ! ຄືເຮົານີ້ຢູ່ຄົນດຽວຍັງສະບາຍພໍ່ແມ່ເຮົາກໍ່ບໍ່ສົນ" ເພື່ອນລາວຄົນນັ້ນຊື່ວ່າທ້າວຈ່ອຍ.



PDF created with pdfFactory Pro trial version www.pdffactory.com



"ໄປບົວສີ ໄປດື່ມເຫລົ້າກັນດີກວ່າ ຄືນນີ້ເຮົາໄປຫລິ້ນກັນ ນໍ ?" ຈ່ອຍຖາມ ບົວສີຕອບ: "ເອີ! ຕົກລົງ ຖ້າວ່າໄປບ່ອນໃດ ຂ້ອຍສະບາຍໃຈໄປໃສຂ້ອຍກໍໄປ".



PDF created with pdfFactory Pro trial version www.pdffactory.com



ຕອນແລງມື້ນັ້ນ ທ້າວຈ່ອຍກໍມາຫາທ້າວບົວສີພາລາວໄປຫລິ້ນ "ໄປ ! ບົວສີ ກູຊິພາມຶງໄປຫລິ້ນບ່ອນທີ່ສະບາຍໃຈທີ່ສຸດເລີຍ" "ເອີ!..ໄປດຽວນີ້ " ຫລັງຈາກນັ້ນທ້າວຈ່ອຍກໍພາລາວໄປຫລິ້ນກິນດື່ມເຫລົ້າຢູ່ໃນເທັກ ຈົນເຮັດທ້າວບົວສີເມົາຈົນບໍ່ຮູ້ສຶກຕົວ "ໄປ ! ບົວສີກູຊິພາມຶງໄປຂຶ້ນສະຫວັນ ຮ່າ..ຮ່າ..ຮ່າ....!" "ຈ່ອຍສະຫວັນຢູ່ໃສ?" ບົວສີຖາມ. ຈ່ອຍຕອບ: "ເອີນະ! ກູຊິພາມຶງໄປດອກ" ບົວສີເມົາກໍເລີຍຕອບ "ເອີໄປກໍໄປ".



PDF created with pdfFactory Pro trial version www.pdffactory.com



ຫລັງຈາກນັ້ນ ທ້າວຈ່ອຍກໍພາທ້າວບົວສີໄປຫ້ອງນ້ຳ ເພື່ອໄປເສບຢາ "ຈ່ອຍມຶງພາກູມາເຮັດຫຍັງ ?" "ກູຊິພາມຶງຂຶ້ນສະຫວັນເກັບເດືອນເກັບດາວ ມຶງບໍ່ຕ້ອງຢ້ານ ເບິ່ງເດີກູຊິເຮັດໃຫ້ມຶງເບິ່ງ" ບົວສີຖາມ: "ເຮັດຫຍັງ? ມຶງຊິເຮັດຫຍັງໃຫ້ກູເບິ່ງ" ຈ່ອຍຕອບ "ມຶງບໍ່ຕ້ອງຖາມກູ ກູພາເຮັດຫຍັງມຶງເຮັດນຳກູຕີ" ບົວສີເມົາແຕ່ຖາມແບບຄົນເມົາ "ຈ່ອຍມຶງເຮັດຫຍັງຫັ້ນ" "ມາ ມາ ມາດູດນຳກັນ", "ບໍ່ກູບໍ່ດູດ", "ເອີມາ ! ດູດໂລດນາບໍ່ຕ້ອງຢ້ານຫຍັງເອົາລອງດູດເບິ່ງດູ່ບົວສີ". ເປັນເພາະຄວາມເມົາ ບົວສີກໍເລີຍລອງດູດຢາເບິ່ງ "ເປັນແນວໃດມຶງໄດ້ຂຶ້ນສະຫວັນແລ້ວບໍ? ນັບເດືອນນັບດາວແລ້ວແມ່ນບໍ ?" ທ້າວຈ່ອຍກໍບອກໃຫ້ທ້າວບົວສີ " ດູດອີກໂລດບໍ່ເປັນຫຍັງດູດໃຫ້ມັນໝົດໂລດ" ຫລັງຈາກນັ້ນບົວສີກໍເມົາຢາເສບຕິດໂດຍບໍ່ຮູ້ສຶກຕົວຫຍັງເລີຍ.



PDF created with pdfFactory Pro trial version www.pdffactory.com



ຈ່ອຍກໍພາບົວສີເມືອເຮືອນ ພໍທ້າວບົວສີມາຮອດເຮືອນກໍແຈ້ງແລ້ວ ພໍ່ແມ່ຖາມລາວກໍຕອບວ່າໄປນອນເຮືອນໝູ່ມາ "ລູກໄປກິນເຫລົ້າມາບໍ ຄືມາເໝັນເຫລົ້າແທ້?", "ຢ່າມາສົນໃຈກັບລູກ ພໍ່ແມ່ບໍ່ເຄີຍຖາມລູກແບບນີ້ຈັກເທື່ອ ພໍ່ແມ່ຄາວຽກມີແຕ່ວຽກຈົນລືມສົນໃຈລູກ ເບິ່ງລູກຊິໄປນອນລູກຢາກນອນ", "ເອົາລູກບໍ່ໄປໂຮງຮຽນຫວ່າ ?" " ບໍ່ລູກເມື່ອຍ" "ເອີຊັ້ນລູກພັກຜ່ອນກ່ອນ ແມ່ໄປວຽກກ່ອນເນີ"



PDF created with pdfFactory Pro trial version www.pdffactory.com



ໄປໂຮງຮຽນໝູ່ເພື່ອນຖາມ "ເປັນຫຍັງບົວສີໂຕຄືມາຈ່ອຍເຫລືອງແທ້ ຮຽນໜັງສືກໍບໍ່ເກ່ງຄືແຕ່ກ່ອນ ໂຕມີຫຍັງໃນໃຈບໍ່?" ເພື່ອນຍິງຖາມລາວ "ໂຕຮູ້ບໍ່ເດືອນນີ້ໂຕໄດ້ເປັນທີ່ສຸດທ້າຍໃດ? ໂຕຮູ້ບໍ່! ຜ່ານມາໂຕເຄີຍເປັນນັກຮຽນເກ່ງໃນຫ້ອງ ແລະ ນັກຮຽນດີ" ບົວສີຕອບ: "ເຮົາບໍ່ຄ່ອຍສະບາຍ ", "ຊັ້ນໂຕຄືບໍ່ໄປຫາໝໍ", "ເຮົາກິນຢາຄືເຈັບທ້ອງແລ້ວ", "ຄັ້ນຊັ້ນເຮົາໄປເຂົ້າຮຽນໂຕບໍ່ໄປຫວະ" "ບໍ່ເຮົາຊິເມືອເຮົາເຈັບທ້ອງ" "ເອີໂຊກດີ".



PDF created with pdfFactory Pro trial version www.pdffactory.com



ບົວສີມາຮອດເຮືອນ ກໍຄິດເສຍໃຈທີ່ຕົນເອງເຄີຍເປັນນັກຮຽນດີ ແລະ ເກັ່ງ ລາວບໍ່ຮູ້ວ່າຫລົງຕິດຢາເສບຕິດແຕ່ເມື່ອໃດ.



PDF created with pdfFactory Pro trial version www.pdffactory.com



ທ້າວຈ່ອຍ ກໍຖືກຈັບເຂົ້າຄຸກແລ້ວເພາະຄະດີປຸ້ນເອົາເງິນ ຊາວບ້ານ.

PDF created with pdfFactory Pro trial version www.pdffactory.com



ບົວສີ: “ໂອຍ !..ຄືວ່າໝາວສັ່ນແທ້ເປັນນຳເຮົາຢາກເລີກຢາ ບໍ? ໂອຍໄປຊື້ຢາກ່ອນ ໂອຍບໍ່ມີເງິນຊ້ຳຈັກຊິເຮັດແນວໃດແມ່ເອົາ ໃຫ້ກໍຊື້ຢາກິນໝົດແລ້ວ” ລາວເລີຍຊອກລັກເອົາເງິນພໍ່ແມ່ລາວພໍ ຊອກເງິນບໍ່ເຫັນລາວກໍ່ທັບເຄື່ອງ ພໍ່ເລີຍຖາມ ”ລູກເປັນຫຍັງບໍ ? ເອົາເງິນໃຫ້ລູກແດ່”, ”ລູກຊິເອົາເງິນໄປເຮັດຫຍັງ?” “ຢ່າຖາມ ຮີບເອົາມາ” ດ້ວຍຄວາມຮັກ ລູກຢາກໄດ້ກໍເອົາໃຫ້.



PDF created with pdfFactory Pro trial version www.pdffactory.com



ຕໍ່ມາມື້ໜຶ່ງພໍ່ແມ່ຖາມວ່າ: " ລູກບໍ່ສະບາຍບໍ ? ໄປຫາໝໍບໍ ? " "ບໍ່ເຮົາບໍ່ໄປ" "ຄັນຊັ້ນໃຫ້ໝໍມາກວດຢູ່ເຮືອນ" ພໍ່ໃຫ້ໝໍມາກວດຮ່າງກາຍລູກຂອງຕົນ ແລ້ວກໍຮູ້ວ່າ ລູກຂອງຕົນຕິດຢາເສບຕິດ ພໍ່ແມ່ລາວເສຍໃຈຫລາຍ, ໜັງສືຮຽນກໍບໍ່ໄດ້ຮຽນເພາະລູກຂອງຕົນໄດ້ກາຍເປັນຄືຄົນປັນຍາອ່ອນ.

PDF created with pdfFactory Pro trial version www.pdffactory.com



ພໍ່ແມ່ ກໍພະຍາຍາມຢູ່ໃກ້ຊິດ ຄອຍເບິ່ງແຍງດູແລ "ເປັນເພາະຂ້ອຍພໍ່ມັນເອີຍ ! ເອົາແຕ່ເງິນໃຫ້ລູກ ແຕ່ໃຫ້ຄວາມສຸກແກ່ລູກບໍ່ພຽງພໍ ເຮົາມີລູກຊາຍຄົນດຽວ ກໍກາຍເປັນແນວນີ້ ".



PDF created with pdfFactory Pro trial version www.pdffactory.com